ໃນວັນທີ 08 ສິງຫາ 2025, ກົມຮ່ວມມື ແລະ ການເງິນສາກົນ, ກະຊວງການເງິນ ໄດ້ຈັດກອງປະຊຸມທົບທວນຄືນຜົນການສຳຫຼວດຮອບວຽນທີ 4 ຂອງການເປັນຄູ່ຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ ຢູ່ສ ປປ ລາວ ແລະ ປຶກສາຫາລືເພື່ອສ້າງແຜນການດຳເນີນງານຖະແຫຼງການວຽງຈັນສະບັບໃໝ່ໂດຍການເປັນປະທານ ຂອງ ທ່ານ ປອ. ວົງຄຳແຫງ ວົງທະຈັກ, ຫົວໜ້າກົມຮ່ວມມື ແລະ ການເງິນສາກົນ, ກະຊວງ ການເງິນ ແລະ ເປັນປະທານຮ່ວມໂດຍທ່ານ ດາວ ຊວນ ຫຼາຍ, ຮັກສາການຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ. ໃນກອງປະຊຸມມີຕາງໜ້າຈາກບັນດາ ກະຊວງຂະແໜງການທີ່ກ່ຽວຂ້ອງ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນ ເຂົ້າຮ່ວມທັງໝົດ 94 ທ່ານ, ທີ່ ໂຮງແຮມ ດັບເບີນທີ ຮິວຕັນ, ນະຄອນຫຼວງວຽງຈັນ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ ແມ່ນເພື່ອ ທົບທວນຄືນຜົນການສຳຫຼວດຮອບວຽນທີ 4 ຂອງການເປັນຄູ່ຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ ຢູ່ ສປປ ລາວ ( The 4th monitoring round of the Global Partnership for Effective Development Cooperation (GPEDC)) ແລະ ປຶກສາຫາລືທິດທາງການຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ ເພື່ອສ້າງຖະແຫຼງການວຽງຈັນໄລຍະ 10 ປີ (Vientiane Declaration (2026 – 2035) ແລະ ແຜນດຳເນີນງານໄລຍະ 5 ປີ ສະບັບໃໝ່.

ກອງປະຊຸມໄດ້ລົງເລິກການປຶກສາຫາລືກ່ຽວກັບຜົນການສຳຫຼວດຮອບວຽນທີ 4 ຂອງການເປັນຄູ່ຮ່ວມມືເພື່ອການພັດທະນາທີ່ມີປະສິດທິຜົນ ຢູ່ ສປປ ລາວ ໂດຍສະເພາະແມ່ນ ບັນດາສິ່ງທ້າທາຍທີ່ສາມາດເກັບກຳ ເພື່ອຫາທິດທາງແກ້ໄຂຮ່ວມກັນ, ປຶກສາຫາລືແຜນຮັບມືກັບການປ່ຽນແປງຂອງທຶນຊ່ວຍເຫຼືອທາງການເພື່ອການພັດທະນາ ທີ່ໂຍກຍ້າຍຈາກທຶນຊ່ວຍເຫຼືອລ້າ ມາເປັນທຶນກູ້ຢືມ ເພື່ອສຸມໃສ່ການພັດທະນາຕາມບູລິມະສິດແຕ່ລະໄລຍະ, ທົບທວນຄືນຜົນການປະເມີນຄວາມຄືບໜ້າ ແລະ ຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນດຳເນີນງານຖະແຫຼງການວຽງຈັນ (2016– 2025) ເພື່ອເປັນຂໍ້ມູນ ແລະ ບ່ອນອີງໃນການກະກຽມຖະແຫຼງການ ແລະແຜນດຳເນີນງານໄລຍະໃໝ່.

ກອງປະຊຸມດັ່ງກ່າວ ສາມາດສັງລວມເອົາບັນດາຄຳຄິດເຫັນ ແລະ ທິດທາງການຮ່ວມມືໃນໄລຍະຕໍ່ໜ້າຈາກບັນດາຄູ່ຮ່ວມພັດທະນາ, ບູລິມະສິດໃນການພັດທະນາຈາກບັນດາກະຊວງຂະແໜງການທີ່ກ່ຽວຂ້ອງ ແລະ ການມີສ່ວນຮ່ວມຈາກບັນດາອົງການຈັດຕັ້ງທາງສັງຄົມ ລວມທັງພາກເອກະຊົນ ໃນແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ. ບັນດາຄຳຄິດເຫັນດັ່ງກ່າວ ເປັນຂໍ້ມູນສຳຄັນສຳລັບການກະກຽມແຜນດຳເນີນງານຖະແຫຼງການວຽງຈັນໄລຍະໃໝ່ ເຊິ່ງຖະແຫຼງການວຽງຈັນສະບັບໃໝ່ດັ່ງກ່າວຈະເປັນເອກະສານສຳຄັນສຳລັບກອງປະຊຸມໂຕະມົນລະດັບສູງ ທີ່ມີກຳນົດການຈະຈັດຂຶ້ນໃນທ້າຍປີ 2025 ນີ້.